ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4459/ກປ

ນະຄອນຫຼວງວຽງຈັນ, ວັນທີ 03 NOV 2023

# ຄຳສັ່ງ
# ກ່ຽວກັບການຫ້າມລ້ຽງ ຫຼື ປ່ອຍສັດນ້ຳຕ່າງຖິ່ນ ທີ່ມີຜົນກະທົບຕໍ່ສັດນ້ຳພື້ນເມືອງ ແລະ ລະບົບນິເວດແຫຼ່ງນ້ຳ

**ເຖິງ:** - ຫ້ອງການ, ບັນດາກົມ ແລະ ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍ ວ່າດ້ວຍການປະມົງ ສະບັບເລກທີ 03/ສພຊ, ລົງວັນທີ 09 ກໍລະກົດ 2009;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 4113/ກລປ, ລົງວັນທີ 06 ຕຸລາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ລົງວັນທີ 10 ຕຸລາ 2023.

ການລ້ຽງສັດນ້ຳ ແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນປະກອບສ່ວນ ເຂົ້າໃນແຜນງານຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ຜະລິດເປັນສິນຄ້າ, ໂດຍສະເພາະ ມີຄວາມຈຳເປັນຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ທີ່ເປັນແຫຼ່ງອາຫານ ແລະ ລາຍຮັບປະຈຳວັນ. ກະຊວງກະສິກຳ ແລະ ປ່າໄມ້ ໄດ້ເອົາໃຈໃສ່ສົ່ງເສີມການລ້ຽງ ແລະ ປົກປັກຮັກສາສັດນ້ຳ ລວມທັງສັດນ້ຳພື້ນເມືອງ ແລະ ແນວພັນປັບປຸງຢ່າງຕໍ່ເນື່ອງ ຈຶ່ງເຮັດໃຫ້ປະເທດເຮົາມີຜະລິດຕະພັນສັດນ້ຳ ສຳລັບບໍລິໂພກເພີ່ມຂຶ້ນ ຢ່າງຕໍ່ເນື່ອງ ຕະຫຼອດມາ.

ເຖິງຢ່າງໃດກໍຕາມ ໃນການລ້ຽງສັດນ້ຳຂອງຊາວກະສິກອນ ທີ່ຜ່ານມາ ພວກເຮົາກໍ່ຍັງພົບບັນຫາ ໂດຍສະເພາະແມ່ນ ຍັງພົບເຫັນຜູ້ລ້ຽງສັດນ້ຳ ໄດ້ນຳເອົາສັດນ້ຳຕ່າງຖິ່ນ ເຂົ້າມາລ້ຽງໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງໄດ້ສ້າງຜົນກະທົບຕໍ່ສັດນ້ຳພື້ນເມືອງ ແລະ ລະບົບນິເວດແຫຼ່ງນ້ຳ ເຊັ່ນ: ເປັນໂຕຍາດແຍ່ງພື້ນທີ່ ແລະ ອາຫານ, ແຜ່ເຊື້ອພະຍາດ, ກາຝາກສັດນ້ຳ, ເປັນໂຕທຳລາຍສັດນ້ຳພື້ນເມືອງ ແລະ ເຮັດໃຫ້ແຫຼ່ງນ້ຳທຳມະຊາດເສື່ອມໂຊມ, ກໍ່ໃຫ້ເກີດການປ່ຽນແປງທາງກຳມະພັນ ພ້ອມທັງສ້າງຜົນກະທົບ ຕໍ່ການພັດທະນາການລ້ຽງສັດນ້ຳທີ່ມີຢູ່ເດີມ.

ສະນັ້ນ, ເພື່ອເປັນການປ້ອງກັນຜົນກະທົບ ແລະ ຄວາມເສຍຫາຍ ທີ່ເກີດຈາກການລ້ຽງສັດນ້ຳຕ່າງຖິ່ນເພີ່ມຂຶ້ນນັ້ນ.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກ ຄຳສັ່ງ:

1. ໃຫ້ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ໂຄສະນາ ເຜີຍແຜ່ ໃຫ້ການຈັດຕັ້ງ ທັງພາກລັດ, ຊາວກະສິກອນ ແລະ ຜູ້ປະກອບການ ໃນຂອບເຂດທົ່ວປະເທດຊາບ ກ່ຽວກັບ ຊະນິດສັດນ້ຳຕ່າງຖິ່ນ ທີ່ມີຜົນກະທົບຕໍ່ສັດນ້ຳພື້ນເມືອງ

ແລະ ລະບົບນິເວດແຫຼ່ງນ້ຳ ແນໃສ່ໃຫ້ທຸກພາກສ່ວນຕ່າງໆ ເຝົ້າລະວັງ, ຕິດຕາມ, ລາຍງານ ແລະ ສະກັດກັ້ນການລ້ຽງສັດນ້ຳຕ່າງຖິ່ນ ທີ່ກຳນົດໃນຕາຕະລາງ ລຸ່ມນີ້:

| ລ/ດ | ຊື່ສັດນ້ຳ ພາສາ ລາວ | ຊື່ສັດນ້ຳ ພາສາຕ່າງປະເທດ | ຮູບພາບສັດນ້ຳ |
|---|---|---|---|
| 1 | ປາໝໍຄາງດຳ | Sarotherodon Melanotheron /Blackchin Tilapia |  |
| 2 | ປາໝໍມາຍັນ | Cichlasoma Urophthalmus |  |
| 3 | ປາໝໍບັດເຕີ | Heterotilapia Buttikoferi |  |
| 4 | ປາໂກໄລເອັດ | Hydrocynus Goliath |  |
| 5 | ປາຄໍ່ອາເມຊອນ | Arapaima Gigas |  |
| 6 | ປາດູດຝຸ່ນ | Hypostomus Plecostomus/Pterygoplichthys Pardalis |  |
| 7 | ປາວີ ຫຼື ປາ ຫູຊ້າງ ຫຼື ປາ ຈະລາເມັດນ້ຳຈືດ | Piaractus Rachypomus/Colossoma Macropomum |  |
| 8 | ປາປີຣັນຢາ | Pygocentrus Nattereri |  |

| | | | |
|---|---|---|---|
| 9 | ປາທຸກຊະນິດທີ່ຕັດແຕ່ງພັນທຸກຳ | All fish species of genetic modification |  |
| 10 | ປູຂົນຈີນ | Eriocheir Sinensis |  |
| 11 | ຫອຍມຸກນ້ຳຈືດ | Hyriopsis/Limnoscapha/Myersiana |  |

2. ໃຫ້ ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການ ປະສານສົມທົບ ກັບ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ດຳເນີນການເກືອດຫ້າມ ນຳເຂົ້າ, ປ່ອຍ ແລະ ລ້ຽງສັດນ້ຳ ທີ່ກຳນົດໃນຂໍ້ 1 ລົງແຫຼ່ງນ້ຳທຳມະຊາດ ຫຼື ອ່າງເກັບນ້ຳຕ່າງໆ ຢ່າງເດັດຂາດ;
3. ໃຫ້ ດ່ານກວດກາສັດຕະວະແພດສາກົນ ແຈ້ງໃຫ້ ຜູ້ນຳເຂົ້າ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຊາບ ກ່ຽວກັບ ການຫ້າມນຳເຂົ້າສັດນ້ຳຕ່າງຖິ່ນ ທີ່ລະບຸຢູ່ໃນ ຂໍ້ 1 ຂອງຄຳສັ່ງສະບັບນີ້ ເຂົ້າມາ ສປປ ລາວ, ຖ້າພົບເຫັນການລະເມີດໃຫ້ດຳເນີນມາດຕະການກັກ, ໃຫ້ສົ່ງກັບຄືນ ຫຼື ທຳລາຍ ຕາມລະບຽບການ ຢ່າງເຂັ້ມງວດ;
4. ໃຫ້ ກົມລ້ຽງສັດ ແລະ ການປະມົງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເພີ່ມທະວີການຕິດຕາມ ແລະ ກວດກາ ການລ້ຽງສັດນ້ຳຕ່າງຖິ່ນ ຫາກພົບເຫັນມີການລ້ຽງ ໃຫ້ຜູ້ລ້ຽງມາຂໍອະນຸຍາດນຳກົມລ້ຽງສັດ ແລະ ການປະມົງ ຕາມລະບຽບການ;
5. ກໍລະນີ ປະຊາຊົນໄປຫາສັດນ້ຳ ຫາກຈັບໄດ້ສັດນ້ຳຕ່າງຖິ່ນ ຫຼື ພົບສັດນ້ຳຕ່າງຖິ່ນ ປະປົນເຂົ້າມາໃນຟາມ ແລະ ບ່ອນລ້ຽງໂດຍບໍ່ເຈດຕະນາ ໃຫ້ນຳໄປບໍລິໂພກ ຫຼື ທຳລາຍ;
6. ກໍລະນີ ອົງການຈັດຕັ້ງ ຫຼື ສະຖາບັນ ມີຈຸດປະສົງຈະສຶກສາຄົ້ນຄວ້າສັດນ້ຳຕ່າງຖິ່ນ ໃຫ້ຂໍອະນຸຍາດນຳ ກົມລ້ຽງສັດ ແລະ ການປະມົງ ຕາມຂັ້ນຕອນ ແລະ ລະບຽບການ ທີ່ ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;
7. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ທັງ ສູນກາງ ແລະ ທ້ອງຖິ່ນ ຮີບຮ້ອນປະສານສົມທົບຊຶ່ງກັນ ແລະ ກັນ ເພື່ອຈັດຕັ້ງຜັນຂະຫຍາຍ ຄຳສັ່ງສະບັບນີ້ ໃຫ້ໄດ້ຮັບຜົນດີ, ພ້ອມທັງມີການສະຫຼຸບລາຍງານ ແລະ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ.

ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ປອ. ເພັດ ພົມພິພັກ